# ລັດຖະທຳມະນູນ ວ່າດ້ວຍ ສິດແລະພັນທະພື້ນຖານຂອງພົນລະເມືອງ



## ມາດຕາ 37.

- ພົນລະເມືອງລາວ ຍິງຊາຍ ມີສິດເທົ່າທຽມກັນໃນດ້ານການເມືອງ ເສດຖະກິດ, ວັດທະນະທຳ ສັງຄົມ ແລະ ຄອບຄົວ.

## ມາດຕາ 38.

- ພົນລະເມືອງລາວ ມີສິດໄດ້ຮັບການສຶກສາ ຮ່ຳຮຽນ, ຍົກສູງຄວາມກ້າວໜ້າ

## ມາດຕາ 35.

- ພົນລະເມືອງລາວ ໂດຍບໍ່ຈຳແນກຍິງຊາຍ, ຖານະທາງດ້ານສັງຄົມ, ລະດັບການສຶກສາ, ຄວາມເຊື່ອຖື ແລະ ຊົນເຜົ່າ ລ້ວນແຕ່ມີຄວາມສະເໝີພາບຕໍ່ໜ້າກົດໝາຍ.

## ມາດຕາ 36.

- ພົນລະເມືອງລາວ ຜູ້ທີ່ມີອາຍຸ ສິບແປດປີຂຶ້ນໄປ ມີສິດປ່ອນບັດເລືອກຕັ້ງ ແລະ ຜູ້ທີ່ມີອາຍຸແຕ່ ຊາວເອັດປີ ມີສິດສະໝັກຮັບເລືອກຕັ້ງເວັ້ນເສຍແຕ່ຜູ້ເປັນບ້າ, ເສຍຈິດ ແລະ ຜູ້ທີ່ຖືກສານຕັດສິນປົດສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ.






## ມາດຕາ 39.

- ພົນລະເມືອງລາວມີສິດເຮັດວຽກ ແລະ ການປະກອບອາຊີບທີ່ບໍ່ຂັດກັບກົດໝາຍ, ຜູ້ອອກແຮງງານມີສິດໄດ້ຮັບການພັກຜ່ອນ, ໄດ້ຮັບການປິ່ນປົວໃນເວລາເຈັບເປັນ, ໄດ້ຮັບການຊ່ວຍເຫລືອໃນກໍລະນີ ທີ່ພົດຄວາມສາມາດອອກແຮງງານ, ເສຍອົງຄະ, ໃນເວລາເຖົ້າແກ່ ແລະ ໃນກໍລະນີອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ມາດຕາ 40.

- ພົນລະເມືອງລາວມີສິດເສລີພາບໃນການຕັ້ງພູມລຳເນົາ ແລະ ໃນການໄປມາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ມາດຕາ 41.

- ພົນລະເມືອງລາວມີສິດຮ້ອງທຸກ, ຮ້ອງຟ້ອງ ແລະ ສະເໜີຄວາມເຫັນຕໍ່ ອົງການທີ່ກ່ຽວຂ້ອງ ກ່ຽວກັບບັນຫາ ທີ່ພົວພັນເຖິງສິດ ແລະ ຜົນປະໂຫຍດລວມຫລື ສິດ ແລະ ຜົນປະໂຫຍດສະເພາະຂອງຕົນ.
- ຄຳຮ້ອງທຸກ, ຄຳຮ້ອງຟ້ອງ ແລະ ຄວາມເຫັນຂອງພົນລະເມືອງ ຕ້ອງໄດ້ຮັບການພິຈາລະນາ ແລະ ແກ້ໄຂ ທີ່ໄດ້ກຳນົດໄວ້ ໃນກົດໝາຍ.

## ມາດຕາ 42.

- ພົນລະເມືອງລາວ ມີສິດໂດຍບໍ່ມີໃຜຈະລ່ວງລະເມີດໄດ້ທາງດ້ານຮ່າງກາຍ,ກຽດສັກສີ ແລະ ເຄຫາສະຖານ. ພົນລະເມືອງລາວ ຈະບໍ່ຖືກຈັບຕົວ ຫລື ກວດຄົ້ນເຄຫາສະຖານ ຖ້າບໍ່ມີຄຳສັ່ງຂອງໄອຍະການສານ ຫລື ສານປະຊາຊົນເວັ້ນເສຍແຕ່ໃນກໍລະນີທີ່ກຳນົດໄວ້ໃນກົດໝາຍ.



Graphic designer: Mr. Songphet VONGPHACHANH